# ການຈັດຕັ້ງປະຕິບັດ
# ການຈັດຊື້-ຈັດຈ້າງ ແລະ ກົນໄກການຮ້ອງທຸກ

ສະເໜີໂດຍ: ນາງ ອາລຸນນີ ມະນີປະກອນ
ຮອງຫົວໜ້າພະແນກ

ຄຸ້ມຄອງການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ລາຄາ
ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ

CONT.TEL MOBILE (856) 20 55424565
Website: www.ppmd.mof.gov.la

This is not an ADB material. The views expressed in this document are the views of the author/s and/or their organizations and do not necessarily reflect the views or policies of the Asian Development Bank, or its Board of Governors, or the governments they represent. ADB does not guarantee the accuracy and/or completeness of the material's contents, and accepts no responsibility for any direct or indirect consequence of their use or reliance, whether wholly or partially. Please feel free to contact the authors directly should you have queries.

- ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017

- ຄຳແນະນຳ ການຈັດຕັ້ງປະຕິບັດກົດໝາຍ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019

# ຄວາມໝາຍ ແລະ ຄວາມສຳຄັນ

ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແມ່ນວຽກງານງານໜຶ່ງ ທີ່ມີຄວາມສຳຄັນ ຕໍ່ການພັດທະນາເສດຖະກິດສັງຄົມແຫ່ງຊາດ ແລະ ເປັນວຽກງານການລົງທຶນໜຶ່ງ ທີ່ເນັ້ນໃສ່ການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາສະຖາບັນ ແລະ ຊັບພະຍາກອນມະນຸດ ເພື່ອວາງພື້ນຖານໃນການພັດທະນາເສດຖະກິດແຫ່ງຊາດ.

ສະນັ້ນ, ລັດຖະບານຈຶ່ງຈຳເປັນຕ້ອງໄດ້ສ້າງກົດໝາຍ ແລະ ລະບຽບການ ເພື່ອມາຄຸ້ມຄອງວຽກງານດັ່ງກາວ ເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນການນຳໃຊ້ ຫຼື ຈ່າຍງົບປະມານຂອງລັດ ເຂົ້າໃນວຽກງານການຈັດຊື້-ຈັດຈ້າງ ໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ

ແນໃສ່ຮັບປະກັນການປະຢັດ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ທຶນຂອງລັດ ໝາຍເຖິງ ງົບປະມານແຫ່ງລັດ ຊຶ່ງລວມມີ ກອງທຶນຂອງລັດ, ທຶນຂອງລັດວິສາຫະກິດ, ທຶນທີ່ໄດ້ມາຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ແລະ ສະຖາບັນການເງິນຕ່າງໆ

# ປະເພດ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ

- ການກໍ່ສ້າງ ແລະ/ຫຼື ການສ້ອມແປງ
- ການສະໜອງສິນຄ້າ ແລະ/ຫຼື ການ ບໍລິການ ວຽກງານ
- ການບໍລິການທີ່ປຶກສາ

ວິທີການຈັດຊື້-
ຈັດຈ້າງດ້ວຍທຶນ
ຂອງລັດ

ການປະມູນ

ການຈັດຈ້າງ
ທີ່ປຶກສາ

# ຮູບແບບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ

- ການປະມູນແບບເປີດກວ້າງ
- ການປະມູນວົງແຄບ
- ການປະມູນດ້ວຍການສົມທຽບລາຄາ
- ການຈັດຊື້ໂດຍກົງ

# ເງື່ອນໄຂຂອງຜູ້ປະມູນ

- ເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີເລກປະຈຳຕົວຜູ້ເສຍອາກອນ ຫຼື ທະບຽນວິສາຫະກິດ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍ

- ມີການຢັ້ງຢືນກ່ຽວກັບຜົນງານ, ປະສົບການ, ຄວາມສາມາດດ້ານເຕັກນິກວິຊາການ ແລະ ການດຳເນີນທຸລະກິດ ທີ່ມີຄຸນນະພາບດີ ໃນວຽກງານການກໍ່ສ້າງ ແລະ ການສ້ອມແປງ, ການສະໜອງສິນຄ້າ ແລະ ການບໍລິການວຽກງານ ແລະ ການບໍລິການທີ່ປຶກສາ

# ວົງເງິນການປະມູນ ລວມທັງພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ



# ວົງເງິນການປະມູນ ລວມທັງພາສີ, ອາກອນ ແລະ ຄ່າທໍານຽມຕ່າງໆ (ຕໍ່)

*ສິນຄ້າ ແລະ ການບໍລິການວຽກງານ*

- ເປີດກ້ວາງ ≥ 200
- ວົງແຄບ ຕາມເງື່ອນໄຂ 4.2.2
- ສືບທຽບ < 200
- ຊື້ໂດຍກົງ ≤ 5 ລ້ານ ແລະ ຕາມເງື່ອນໄຂ 4.2.4

# ວົງເງິນການຈັດຈ້າງ ລວມທັງພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ (ຕໍ່)

**ຈັດຈ້າງ ທີ່ປຶກສາ**

**ຄຸນນະພາບ-ລາຄາ**

QCBS ≥ 1 ຕື້

**ຄຸນນະພາບ**

QBS, FBS,

LCS, CQS,

SSS < 1 ຕື້

# ຮອບວຽນ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ



# ເວລາປະກາດການປະມູນ

- ການກໍ່ສ້າງ ແລະ ສະໜອງສິນຄ້າ ແລະ ການບໍລິການວຽກງານ
- ເປີດກ້ວາງ 35 ວັນ
- ຊື້ໂດຍກົງ ບໍ່ມີ
- ວົງແຄບ 30 ວັນ
- ສົບທຽບ 15 ວັນ

# ເວລາປະກາດການຈັດຈ້າງທີ່ປຶກສາ

ຂັ້ນຕອນຄັດ
ຈ້ອນ ຢ່າງ
ໜ້ອຍ 15 ວັນ

(ໜ້າ 6 ຂອງ
ຄຳແນະນຳ)

QCBS,
QBS,
FBS,
LCS

CQS

ຂັ້ນຕອນການ
ປະກອບ
ເອກະສານການ
ສະເໜີ ຢ່າງ
ໜ້ອຍ 30 ວັນ

(ໜ້າ 6 ຂອງຄາ
ແນະນຳ)

# ຂັ້ນຕອນສຳຄັນ ທີ່ຄວນເອົາໃຈໃສ່ໃນການປະຕິບັດແຕ່ລະຮູບແບບ

- **ກອງປະຊຸມກ່ອນຍື່ນເອກະສານ;**

  ຈັດກ່ອນວັນສຸດທ້າຍທີ່ກຳນົດສົ່ງຊອງ 10 ວັນ

- **ການຍື່ນເອກະສານ;**

  ຕ້ອງຍື່ນກ່ອນ ວັນ ແລະ ເວລາປິດຮັບ, ຊອງຊ້າສົ່ງ ຄືນ

- **ສະຖານທີ່ຮັບເອກະສານ;**

  ຖ້າມີການປ່ຽນແປງຕ້ອງແຈ້ງດ່ວນ (ເປັນລາຍລັກອັກສອນ)

- **ການເປີດເອກະສານ;**

  ເປີດຊ້ອງໜ້າຄະນະ ແລະ ຜູ້ປະມູນເຂົ້າຮ່ວມ, ອ່ານອອກສຽງ, ບັນທຶກ, ກ່ອບປີ້ ແຈກຢາຍຄະນະ ແລະ ຜູ້ປະມູນ.

# ກົນໄກການຮ້ອງທຸກ

## ມາດຕາ 46

ການຮ້ອງທຸກ ແມ່ນການສະເໜີຮ້ອງທຸກຂອງຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເປັນຕົ້ນ ຄວາມບໍ່ຍຸຕິທໍາ, ຄວາມບໍ່ໂປ່ງໃສ ແລະ ການເຂົ້າຂ້າງ ອອກຂາ ຂອງຄະນະກໍາມະການປະມູນ, ຊຶ່ງຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກ ມີສິດຮ້ອງທຸກຕໍ່ເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ເພື່ອພິຈາລະນາແກ້ໄຂ ພາຍໃນກໍານົດເວລາ 15 ວັນ.

## ຂໍ້ 15.1 (0477/ກງ

ຜູ້ປະມູນ ຫຼື ຜູ້ເຂົ້າຮ່ວມຄັດເລືອກ ສາມາດຍື່ນສະເໜີຮ້ອງທຸກ ເປັນລາຍລັກອັກສອນ ເຖິງເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ຫຼື ຄະນະກຳມະການປະມູນ ຖ້າເຫັນວ່າຕົນເອງມີຄວາມອັບປະ ໂຫຍດ,ການເສຍຫາຍທີ່ເກີດຈາກການລະເມີດກົດໝາຍ ຫຼື ລະ ບຽບການ ຫຼື ການປະຕິບັດໜ້າທີ່ຂອງພະນັກງານ ຊຶ່ງຄຳສະເໜີ ຮ້ອງທຸກຕ້ອງໄດ້ຍື່ນກ່ອນເຊັນສັນຍາ 14 ວັນ.

# ກົນໄກ ແລະ ວິທີການຮ້ອງທຸກ

## ກົນໄກ ການຮ້ອງທຸກ

ຖ້າມີການຮ້ອງທຸກ ຕ້ອງມີການແກ້ໄຂ ພາຍໃນ 15 ວັນ

ຜູ້ຮ້ອງທຸກ ຕ້ອງຍື່ນ ກ່ອນການເຊັນ ສັນຍາ 14 ວັນ

ເຈົ້າຂອງໂຄງການພິຈາລະນາ 15 ວັນ

ຂະແໜ່ງການເງິນ ພິຈາລະນາ 15 ວັນ

ຄະນະສະເພາະກິດ ແກ້ໄຂ 15 ວັນ

ຂະແໜງການເງິນ ຂໍໃຫ້ດຳເນີນແກ້ໄຂຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

# ຂັ້ນຕອນການຮ້ອງທຸກ



# ຂະບວນການຂັບເຄື່ອນດ້ວຍ 10 ແບບຟອມ

- PPMD/1 ໃບຄໍາຮ້ອງ ຂໍທົບທວນຄືນຂັ້ນຕອນການຈັດຊື້-ຈັດຈ້າງ
- PPMD/2 ໜັງສືສະເໜີ ຂໍໃຫ້ສົ່ງໃບຄໍາຮ້ອງທີ່ຖືກຕ້ອງມາໃໝ່
- PPMD/3 ໜັງສືທາງລັດຖະການ
- PPMD/4 ໜັງສືສະເໜີ ຂໍໃຫ້ສົ່ງໃບຄໍາຮ້ອງທີ່ຖືກຕ້ອງມາໃໝ່
- PPMD/5 ໜັງສືສະເໜີ ຂໍຍົກເລີກການໂຈະຂະບວນການຈັດຊື້-ຈັດຈ້າງ
- PPMD/6 ໜັງສືສະເໜີ ການພິຈາລະນາຄໍາຮ້ອງທຸກ
- PPMD/7 ໜັງສືສະເໜີມອບໝາຍຄະນະສະເພາະກິດ 3 ທ່ານ
- PPMD/8 ຂັ້ນຕອນແນະນໍາ
- PPMD/9 ໜັງສືແຈ້ງການ ການຕັດສິນຂອງຄະນະສະເພາະກິດ
- PPMD/10 ໜັງສືທາງລັດຖະການ ວ່າດ້ວຍຄູ່ກໍລະນີບໍ່ສາມາດປະຕິບັດຕາມຄໍາຕັດສິນ


ຖາມ
ຕອບ
ຂອບ
ໃຈ